ເພື່ອອອກຂ່າວທັນທີ

# ກອງປະຊຸມສາກົນ ໄດ້ສະເໜີບູລິມະສິດ ເພື່ອ ໃຫ້ປະເທດໃນອ່າງແມ່ນ້ຳຂອງ ຕອບລຸ່ມ ບັນລຸການພັດທະນາແບບຍືນຍົງ

**ສຽມລຽບ, ຣາຊະອານາຈັກກຳປູເຈຍ, ວັນທີ 3 ເມສາ 2018-** ກອງປະຊຸມສາກົນ ຈັດຂຶ້ນໂດຍ ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ໄດ້ດຳເນີນໄປເປັນເວລາ ສອງ ວັນ ໄດ້ປິດລົງໃນມື້ນີ້. ກອງປະຊຸມດັ່ງກ່າວເປັນກອງປະຊຸມໜຶ່ງທີ່ຍິ່ງໃຫຍ່ທີ່ສຸດ ທີ່ ຄມສ ເຄີຍຈັດມາ ໂດຍມີ ຜູ້ເຂົ້າຮ່ວມ ປະມານ 400 ຄົນ ຈາກ ລັດຖະບານຂອງປະເທດແມ່ນ້ຳຂອງ, ອົງການຈັດຕັ້ງທີ່ບໍ່ສັງກັດ ລັດຖະບານ, ສະຖາບັນຄົ້ນຄວ້າ, ພາກສ່ວນເອກະຊົນ ແລະ ອົງການຄຸ້ມຄອງອ່າງນ້ຳຕ່າງໆ. ຜູ້ເຂົ້າ ຮ່ວມໄດ້ສະເໜີ ຫຼາຍປະເດັນ ໃນການປັບປຸງການຮ່ວມມື ເພື່ອ ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ໃນພາກພື້ນ.

ລັດຖະມົນຕີຊັບພະຍາກອນນ້ຳ ແລະ ອຸຕຸນິຍົມ ທັງເປັນ ສະມາຊິກສະພາມົນຕີ ຄມສ ຂອງ ຣາຊະອານາຈັກກຳປູເຈຍ, ທ່ານ ລີມ ກຽນ ຮໍ ໄດ້ ກ່າວໃນພິທີເປີດກອງປະຊຸມ ໃນວັນຈັນທີ່ຜ່ານມາວ່າ: "ການຮ່ວມມື ແລະ ການດຳເນີນງານທີ່ກົມກຽວ ກັນ ຂອງ ບັນດາພາກສ່ວນກ່ຽວຂ້ອງ, ຄວາມສາມາດ, ທັດສະນະທີ່ແຕກຕ່າງກັນ, ການປະກອບສ່ວນ ແລະ ການປະສານງານຂອງ ພວກເຮົາທີ່ສອດຄ່ອງກົມກຽວຈະ ຍົກສູງພາລະບົດບາດ ເພື່ອ ຮັບມືກັບສິ່ງທ້າຍທາຍ ແລະ ໝູນໃຊ້ໂອກາດທີ່ມີ ໃນອ່າງແມ່ນ້ຳຂອງ ຕະຫຼອດເສັ້ນທາງການຮ່ວມມື ຂອງພວກເຮົາ."

ກອງປະຊຸມ ໄດ້ດຳເນີນໄປໃນບັນຍາກາດທີ່ດີ ໂດຍໄດ້ ທົບທວນຄືນການຮ່ວມກັນ ໃນຂົງເຂດວຽກງານຂອງ ຄມສ - ນັບແຕ່ ການສ້າງ ແລະ ຈັດຕັ້ງປະຕິບັດ ບັນດາບົດແນະນຳ, ຍຸດທະສາດ ແລະ ລະບຽບການ ເພື່ອ ການຕິດຕາມກວດກາ, ການປະເມີນຜົນ ແລະ ການລາຍງານສະພາບອ່າງ ຮ່ວມກັນ, ລວມທັງການເຮັດວຽກຮ່ວມກັບຄູ່ຮ່ວມງານ ກໍຄື ພາກສວນກ່ຽວຂ້ອງ.

ຜູ້ເຂົ້າຮ່ວມກອງປະຊຸມໄດ້ສະຫລຸບວ່າ: ຄວາມພະຍາຍາມຮ່ວມກັນ ໃນຄັ້ງນີ້ບໍ່ພຽງແຕ່ ໄດ້ສະຫນັບສະໜູນ ການປະກອບສ່ວນ ຂອງບັນດາປະເທດ ສະມາຊິກໃນການຈັດຕັ້ງປະຕິບັດ ເປົ້າຫມາຍການພັດທະນາແບບຍືນຍົງ ທີ 6 ກ່ຽວກັບ ນ້ຳເທົ່ານັ້ນ, ແຕ່ຍັງ ສະຫນັບສະຫນຸນເປົ້າຫມາຍກ່ຽວກັບ ຄວາມທຸກຍາກ, ຄວາມອຶດຫິວ, ບົດບາດຍິງຊາຍ, ພະລັງງານ,

ພື້ນຖານໂຄງລ່າງ, ການປ່ຽນແປງດິນຟ້າອາກາດ, ສິ່ງແວດລ້ອມ, ຄວາມສະຫງົບ ແລະ ສະຖາບັນ ກໍຄື ການຮ່ວມມື. ຄມສ ຮັບຮູ້ບົດບາດທີ່ສຳຄັນ ຂອງ ການພັດທະນາ ແລະ ການຄຸ້ມຄອງ ນໍ້າ ແລະ ຊັບພະຍາກອນທີ່ກ່ຽວຂ້ອງ ຕໍ່ການບັນລຸການພັດທະນາທີ່ຍືນຍົງ. ຄມສ ມຸ່ງໝັ້ນ ສະໜອງ ຂໍ້ມູນທີ່ຊັດເຈນ ເພື່ອສະໜັບສະໜູນປະເທດໃນອ່າງແມ່ນໍ້າຂອງໃນການ ປຶກສາຫາລື, ການຕັດສິນໃຈ ແລະ ການຮ່ວມມື ເພື່ອໃຫ້ບັນລຸໄດ້ ຜົນປະໂຫຍດຮ່ວມກັນ ແລະ ສ້າງຄວາມກົມກຽວ.

ຕົວຢ່າງທີ່ດີອັນໜຶ່ງແມ່ນ ຜູ້ເຂົ້າຮ່ວມກອງປະຊຸມ ໄດ້ຮັບຮູ້ວ່າ ການສຶກສາການພັດທະນາ ແລະ ຄຸ້ມຄອງແມ່ນໍ້າຂອງ ແບບຍືນຍົງຂອງ ຄມສ ຊຶ່ງ ໄດ້ສຳເລັດ ລົງຫຼັງຈາກທີ່ໃຊ້ເວລາຫົກປີ, ເຊິ່ງຮູ້ຈັກໃນຊື່ ການສຶກສາຂອງສະພາມົນຕີ ນັ້ນ ແມ່ນ ສາມາດສະໜອງຂໍ້ມູນທີ່ໜັກແໜ້ນບົນພື້ນຖານການຄົ້ນຄວ້າວິທະຍາສາດ, ກ່ຽວກັບ ການຄຸ້ມຄອງແມ່ນໍ້າຂອງ, ອັນຈະເປັນຜົນປະໂຫຍດໃນການວາງນະໂຍບາຍຕ່າງໆ.

ຜົນຂອງການສຶກສາ ໄດ້ເຮັດໃຫ້ຮູ້ຜົນປະໂຫຍດທາງບວກ ແລະ ລົບ ຂອງ ການພັດທະນາ. ການຮັບມືກັບ ຜົນກະທົບຂ້າມຜ່ານຊາຍແດນ ແມ່ນມີຄວາມຈຳເປັນຕ້ອງໄດ້ຮ່ວມມືກັນ ເຊັ່ນ: ການສ້າງປະໂຫຍດສູງສຸດ ແລະ ຄວາມເສຍຫາຍໜ້ອຍທີ່ສຸດໃນການຈັດຕັ້ງປະຕິບັດ ແຜນງານ ແລະ ໂຄງການ, ການວາງມາດຕະການ ໃນການບັນເທົາຜົນກະທົບ, ແລະ ການສະເໜີທາງເລືອກກ່ຽວກັບສະຖານທີ່ ແລະ ການອອກແບບ ໂຄງການພັດທະນາພື້ນຖານ ໂຄງລ່າງ ທີ່ ຮັບມືກັບການຮັບປະກັນການສະໜອງ ນໍ້າ, ອາຫານ ແລະ ພະລັງງານ ແລະ ສິ່ງທີ່ສາມາດ ລົງທຶນ ແລະ ມີກຳມະສິດຮ່ວມກັນ ໂດຍປະເທດ ໃນແມ່ນໍ້າແມ່ຂອງ-ລ້ານຊ້າງ.

ໂດຍສອດຄ່ອງກັບຈຸດປະສົງຂອງກອງປະຊຸມ ຄື ການສ້າງຄວາມເຂັ້ມແຂງໃນການຮ່ວມມືກັນ, ກອງປະຊຸມສາກົນຄັ້ງນີ້ ຍັງໄດ້ມີການເຊັນບົດບັນທຶກ ຄວາມເຂົ້າໃຈຮ່ວມກັນ ສອງສະບັບ ລະຫວ່າງ ຄມສ ແລະ ອົງການສະຫະປະຊາຊາດ ເພື່ອເສດຖະກິດ, ວັດທະນະທຳ ແລະ ສັງຄົມ ໃນຂົງເຂດອາຊີປາຊີຟິກ ແລະ ຫ້ອງການ ອົງການສະຫະປະຊາຊາດເພື່ອ ການບໍລິການ ໂຄງການ. ຄມສ ຈະຮ່ວມມືກັບ ອົງການສະຫະປະຊາຊາດ ເພື່ອເສດຖະກິດ, ວັດທະນະທຳ ແລະ ສັງຄົມ ໃນຂົງເຂດອາຊີປາຊີຟິກເພື່ອກຳນົດ ແລະ ປະເມີນຄວາມສ່ຽງໄພພິບັດ, ບັນເທົາຄວາມສ່ຽງ, ແລະ ການກະກຽມ ການຮັບມື ກັບ ໄພພິບັດສຸກເສີນ ເຊັ່ນໄພນໍ້າຖ້ວມ ແລະ ແຫ້ງແລ້ງ ຢ່າງມີປະສິດທິຜົນ. ສຳລັບການຮ່ວມມື ກັບ ຫ້ອງການ ອົງການສະຫະປະຊາຊາດເພື່ອການບໍລິການໂຄງການ ແມ່ນເພື່ອຊ່ວຍເຫຼືອການຈັດຊື້ຈັດຈ້າງ ແລະ ລະດົມທຶນ ໃຫ້ກັບໂຄງການ ແບບທົ່ວອ່າງ ຂອງ ຄມສ ແລະ ອື່ນໆ.

ຂໍ້ຄວາມ ແລະ ຂໍ້ສະເໜີ ຈາກກອງປະຊຸມສາກົນໃນຄັ້ງນີ້ ຈະເປັນຂໍ້ມູນ ໃຫ້ກັບ ກອງປະຊຸມລັດຖະມົນຕີ ຄມສ, ເຊິ່ງຈະຈັດໃນວັນທີ 4 ເມສາ 2018, ແລະ

ກອງປະຊຸມສຸດຍອດຄັ້ງທີ 3, ເຊິ່ງ ບັນດາຜູ້ນຳລັດຖະບານຈາກປະເທດສະມາຊິກ ຄມສ ແລະ ຄູ່ຮ່ວມເຈລະຈາ ຈະໄດ້ປຶກສາຫາລືກັນ ໃນວັນພະຫັດ ທີ 5 ເມສາ 2018 ເຊິ່ງທັງສອງກອງປະຊຸມຈະຈັດຢູ່ ສຽມລຽບ, ຣາຊະອານາຈັກກຳປູເຈຍ.

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງ ຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

**- ຈົບ -**

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :**

ທ່ານ ໂສພຽກ ແມສ
ເຈົ້າໜ້າທີ່ ການ ຂ່າວສານ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ext. 4607
ໂທລະສັບມືຖື : +855-12266653 (ຣາຊະອານາຈັກກຳປູເຈຍ)
+856-20-77779168 ( ສປປ ລາວ)